ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

# ຂະບວນການເຄື່ອນໄຫວກິດຈະກຳກິລາບານເຕະມິດຕະພາບ ເພື່ອ ສະເຫຼີມສະຫຼອງ ວັນແມ່ຍິງສາກົນ ທີ 08 ມີນາ ( 1910 – 2017 ) ຄົບຮອບ 107 ປີ

ເພື່ອເປັນການຂໍ່ານັບຮັບຕ້ອນ **ວັນແມ່ຍິງສາກົນ** ຄົບຮອບ **107** ປີ **( 08 ມີນາ 1910 - 2017 )** ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໃນນາມສາມອົງການຈັດຕັ້ງມະຫາຊົນ ໄດ້ມີການຈັດຂະບວນການແຂ່ງຂັນກິລາບານເຕະມິດຕະພາບຂຶ້ນໃນ **ວັນອັງຄານ ທີ 07 ມີນາ 2017** ເວລາ **17:00 ໂມງ** ທີ່ເດີ່ນກິລາບານເຕະ **ຄູນຄຳ** ບ້ານນາຄຳ, ເມືອງສີໂຄດຕະບອງ ເຊິ່ງເປັນການພົບກັນລະຫວ່າງ **"ທຄຕລ ພົບກັບ ກົມພົວພັນສາກົນ ທຫລ"**, ນຳພາໂດຍ **ທ່ານ ພູຂົງ ຈັນທະຈັກ** ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງເທດລາວ ມະຫາຊົນ ພ້ອມດ້ວຍ **ທ່ານ ອ່ອດ ພົມຊຽງດີ** ຫົວໜ້າກົມພົວພັນສາກົນ ທະນາຄານແຫ່ງ ສປປລາວ ແລະ ສະມາຊິກຂອງທັງສອງພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.



ກ່ອນຈະເລີ່ມຕົ້ນການແຂ່ງຂັນກິລາ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ ໄດ້ກ່າວຄຳອວຍພອນ ແລະ ມອບຊໍ່ດອກໄມ້ໃຫ້ທ່ານຫົວໜ້າກົມພົວພັນສາກົນ ທຫລ ພ້ອມດ້ວຍອຸປະຖຳເສື້ອກິລາຈຳນວນ 40 ຜືນ.












ການແຂ່ງຂັນກິລາບານເຕະມິດຕະພາບດຳເນີນໄປດ້ວຍບັນຍາກາດມ່ວນຊື່ນຟົດຟື້ນ ແລະ ຄວາມມີນ້ຳໃຈນັກກິລາຂອງທັງສອງຝ່າຍ. ຫຼັງຈາກການແຂ່ງຂັນສິ້ນສຸດລົງ ໄດ້ມີການຮ່ວມພາເຂົ້າສາມັກຄີກັນ ເພື່ອພົບປະແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນແລະກັນ ເພື່ອສະດວກໃນການ ປະສານງານທາງດ້ານວິຊາສະເພາະ ທັງເປັນການສ້າງຄວາມສຳພັນໄມຕີຂອງທັງສອງພາກສ່ວນໃຫ້ແໜ້ນ ແຟ້ນຍິ່ງຂຶ້ນ.

**<u>ສະຫຼຸບຜົນການແຂ່ງຂັນ</u>**

- **ບານເຕະຊາຍ:** ທຄຕລ ຊະນະ ກົມພົວພັນສາກົນ ທຫລ, **7 : 6** ປະຕູ
- **ບານເຕະຍິງ:** ທຄຕລ ສະເໝີ ກົມພົວພັນສາກົນ ທຫລ, **0 : 0** ປະຕູ

ວັນທີ 10 ມີນາ 2017, ຂຽນຂ່າວ: ທ້າວ ສຸລິຍົງ ສຸກຈັນດີ

ພາບໂດຍ: ທ້າວ ວຽງທະສອນ ພົມພັກດີ